ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 79/ສພຂ.ຊຍ

ໄຊຍະບູລີ, ວັນທີ 26 ກໍລະກົດ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດ ມະຕິ ກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 11/ສພຂ.ຊຍ, ລົງວັນທີ 14 ພຶດສະພາ 2021

- ອີງຕາມກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມບົດລາຍງານຂອງອົງການປົກຄອງແຂວງ ຕໍ່ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II, ຄັ້ງວັນທີ 25 ກໍລະກົດ 2024

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄໍາເຫັນຢ່າງເລິກເຊິ່ງຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 11/ສພຂ.ຊຍ, ລົງວັນທີ 14 ພຶດສະພາ 2021. ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາຜົນສໍາເລັດຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ ຕາມມະຕິເລກທີ 11/ສພຂ.ຊຍ, ລົງວັນທີ 14 ພຶດສະພາ 2021.**

ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບສູງຕໍ່ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນໄລຍະຜ່ານມາ ເຊິ່ງເຫັນໄດ້ວ່າອົງການປົກຄອງແຂວງກໍ່ໄດ້ຖືວຽກງານນີ້ເປັນບູລິມະສິດ ແລະ ໄດ້ຈັດສັນງົບປະມານຂອງລັດ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ, ທຶນສົມທົບຈາກຜູ້ປະກອບການ ແລະ ປະຊາຊົນຈໍານວນຫຼາຍລົງຄວນເຂົ້າໃສ່ການພັດທະນາເຂດຊົນນະບົດຫ່າງໄກສອກຫຼີກ, ຄອບຄົວທຸກຍາກ, ບ້ານທຸກຍາກໃນແຕ່ລະທ້ອງຖິ່ນ ໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວສະແດງອອກ: ມາຮອດປັດຈຸບັນ ທົ່ວແຂວງມີຄອບຄົວພົ້ນທຸກເພີ່ມຂຶ້ນເປັນ 52.296 ຄອບຄົວ ກວມ 70,18%,

ຄອບຄົວທຸກຍາກໄດ້ຫຼຸດລົງ ຍັງເຫຼືອ 23.907 ຄອບຄົວ ກວມ 29,82%, ບ້ານພົ້ນທຸກມີ 316 ບ້ານ ກວມ 73,95%, ບ້ານທຸກຍາກຫຼຸດລົງຍັງເຫຼືອ 114 ບ້ານ ກວມ 26,04%, ເມືອງທີ່ຍັງບໍ່ທັນພົ້ນທຸກຍັງເຫຼືອ 3 ເມືອງ ກວມ 27,28%; ຄອບຄົວພັດທະນາ ກວມ 55,05%, ບ້ານພັດທະນາ ກວມ 37,67% ຂອງບ້ານທັງໝົດໃນທົ່ວແຂວງ; ສ້າງບ້ານເປັນຫົວໜ່ວຍພັດທະນາບັນລຸ 4 ດ້ານ ມີ 369 ບ້ານ ເທົ່າກັບ 85%, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ບັນລຸ 5 ດ້ານ ມີ 7 ເມືອງ ເທົ່າກັບ 63,63%, ສ້າງແຂວງເປັນຫົວໜ່ວຍຍຸດທະສາດຕາມ 7 ດ້ານ, 66 ຕົວຊີ້ບອກ ມີຄວາມຄືບໜ້າເປັນກ້າວໆມາ.

ແຕ່ເຖິງຢ່າງໃດກໍ່ຕາມ ຜ່ານການຕິດຕາມກວດກາຂອງຄະນະປະຈຳສະພາ, ສະມາຊິກສະພາປະຊາຊົນແຂວງ ຕໍ່ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິ 11/ສພຂ.ຊຍ, ລົງວັນທີ 14 ພຶດສະພາ 2021 ເຫັນວ່າ ບັນດາຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນ 5 ປີ ( 2021-2025 ) ຍັງມີຄວາມຄືບໜ້າຊັກຊ້າ; ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍບັນດານະໂຍບາຍ, ນິຕິກຳທີ່ກ່ຽວຂ້ອງຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ; ວຽກງານກໍ່ສ້າງຮາກຖານເມືອງ, ວຽກງານພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ ຍັງບໍ່ເປັນເສົາຄ້ຳເຊິ່ງກັນ ແລະ ກັນ; ຫຼາຍເມືອງຍັງບໍ່ທັນກຳແໜ້ນບັນດາຄາດໝາຍພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ການປະເມີນມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາຕາມດຳລັດ 348/ລບ ບາງຕົວເລກຄາດໝາຍຂອງສູນກາງ ແລະ ທ້ອງຖິ່ນຄາດເຄື່ອນກັນ; ການຈັດສັນທີ່ດິນທຳການຜະລິດໃຫ້ປະຊາຊົນ ຫຼາຍເມືອງຍັງບໍ່ທັນໄດ້ຮັບການຈັດສັນ; ປະຊາຊົນຈຳນວນໜຶ່ງບໍ່ມີອາຊີບທີ່ໝັ້ນຄົງ; ການນຳພາ-ຊີ້ນຳວຽກງານຕົວຈິງ ຢູ່ຂັ້ນຮາກຖານບໍ່ທັນເຂັ້ມແຂງເທົ່າທີ່ຄວນ; ຂະແໜງການກ່ຽວຂ້ອງຈຳນວນໜຶ່ງຍັງຂາດຄວາມຮັບຜິດຊອບ ແລະ ຖືວຽກພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນຄວາມຮັບຜິດຊອບຂອງພະແນກກະສິກຳ ແລະ ປ່າໄມ້ເທົ່ານັ້ນ.

**ມາດຕາ 2 ຮັບຮອງເອົາທິດທາງ ແຜນການ, ຄາດໝາຍສູ້ຊົນ ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນຕໍ່ໜ້າ.**

ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ພິຈາລະນາ ແລະ ມີຄວາມເອກະພາບໂດຍພື້ນຖານຮັບຮອງເອົາບັນດາຄາດໝາຍວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງອົງການປົກຄອງແຂວງ ຮອດປີ 2025 ມີດັ່ງນີ້:

**2.1. ຄາດໝາຍຮອດປີ 2025 ເພີ່ມເຕີມຈາກມະຕິ 58/ສພຂ.ຊຍ, ລົງວັນທີ 28 ສິງຫາ 2023:**

1). ສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາ 3 ຈຸດສຸມ ທີ່ເປັນບູລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຕາມແຜນທີ່ວາງໄວ້;

2). ສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ 15.459 ຄອບຄົວ, ເຮັດໃຫ້ຄອບຄົວທຸກຍາກຍັງເຫຼືອບໍ່ເກີນ 20.045 ຄອບຄົວ ເທົ່າກັບ 25% ຂອງຄອບຄົວທັງໝົດ;

3). ສູ້ຊົນສ້າງບ້ານພົ້ນທຸກໃຫ້ໄດ້ 29 ບ້ານ ເຮັດໃຫ້ບ້ານພົ້ນທຸກຍັງເຫຼືອ 85 ບ້ານ;

4). ສູ້ຊົນສ້າງເມືອງພົ້ນທຸກໃຫ້ໄດ້ 2 ເມືອງ ຄື: ເມືອງຊຽງຮ່ອນ ແລະ ເມືອງໄຊຍະບູລີ;

5). ສູ້ຊົນສ້າງຄອບຄົວພັດທະນາໃຫ້ໄດ້ 8.000 ຄອບຄົວ;

6). ສູ້ຊົນສ້າງບ້ານພັດທະນາໃຫ້ໄດ້ເພີ່ມຕື່ມ 10 ບ້ານ;

7). ສູ້ຊົນສ້າງເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 2 ເມືອງ ຄື: ເມືອງເງິນ ແລະ ເມືອງປາກລາຍ;

8). ສູ້ຊົນສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດໃຫ້ໄດ້ 2 ຈຸດ ຄື: ບ້ານ ບົວບານ ແລະ ບ້ານ ທອງ.

2.2. ແຜນການປະຈຳປີ 2024 :

1). ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ດ້ວຍການຫັນພະນັກ ງານລົງຊ່ວຍ ເມືອງ - ບ້ານ ເພື່ອນຳພາ-ຊີ້ນຳການປະຕິບັດແຜນການພັດທະນາບ້ານຢ່າງຕໍ່ເນື່ອງ;

2). ສູ້ຊົນຂຽນແຜນພັດທະນາ 3 ຈຸດສຸມ ທີ່ເປັນບຸລິມະສິດ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ສຳເລັດ;

3). ສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ 2.300 ຄອບຄົວ (ເອກະສານຊ້ອນທ້າຍ 1);

4). ສູ້ຊົນສ້າງບ້ານພົ້ນທຸກໃຫ້ໄດ້ 19 ບ້ານ ໃນນີ້ ເມືອງໄຊຍະບູລີ ມີ 3 ບ້ານ ຄື: ບ້ານນາຊ່ຳ-ພາຊ້າງ, ບ້ານນາລອມ ແລະ ບ້ານຫ້ວຍເລິກ; ເມືອງຄອບ ມີ 1 ບ້ານ ຄື: ບ້ານປາງມອນ; ເມືອງຫົງສາ ມີ 2 ບ້ານ ຄື: ບ້ານຫ້ວຍຈອງ, ບ້ານພູດອກໄມ້; ເມືອງເງິນ ມີ 1 ບ້ານ ຄື: ບ້ານຫ້ວຍເຜິ້ງ; ເມືອງຊຽງຮ່ອນ ມີ 3 ບ້ານ ຄື: ບ້ານປາກເປັດ, ບ້ານລາວສະໃນ, ບ້ານຫົວເມືອງ; ເມືອງພຽງ ມີ 2 ບ້ານ ຄື: ບ້ານປາກຊອງ, ບ້ານຫ້ວຍຊາກ; ເມືອງປາກລາຍ ມີ 2 ບ້ານ ຄື: ບ້ານ ນາຖຸງ, ບ້ານລາດສະຫວ່າງ; ເມືອງບໍ່ແຕນ ມີ 1 ບ້ານ ຄື: ບ້ານ ໜອງໃຫຍ່; ເມືອງທົ່ງມີໄຊ ມີ 2 ບ້ານ ຄື: ບ້ານ ນາເປືອຍ, ບ້ານແຄ່ນ; ເມືອງໄຊສະຖານ ມີ 2 ບ້ານ ຄື: ບ້ານ ດອຍກາວ ແລະ ບ້ານ ພູຕຸ່ຍ.

5). ສູ້ຊົນສ້າງເມືອງພົ້ນທຸກໃຫ້ໄດ້ 1 ເມືອງ ຄື: ເມືອງໄຊຍະບູລີ;

6). ສູ້ຊົນສ້າງຄອບຄົວພັດທະນາໃຫ້ໄດ້ 2.000 ຄອບຄົວ (ເອກະສານຊ້ອນທ້າຍ 2);

7). ສູ້ຊົນສ້າງບ້ານພັດທະນາໃຫ້ໄດ້ 30 ບ້ານ ໃນນີ້ ເມືອງໄຊຍະບູລີ ມີ 6 ບ້ານ ຄື: ບ້ານນາງິ້ວ, ບ້ານຕາລານ, ບ້ານສອນ, ບ້ານລ້ອງປໍ່, ບ້ານພາປຸນ, ບ້ານນາລາ; ເມືອງຄອບ ມີ 2 ບ້ານ ຄື: ບ້ານປ່າຄາ, ບ້ານປາກຄອບ; ເມືອງຫົງສາ ມີ 2 ບ້ານ ຄື: ບ້ານນ້ຳສິບ, ບ້ານຫ້ວຍຍາງ; ເມືອງເງິນ ມີ 2 ບ້ານ ຄື: ບ້ານຂອນ, ບ້ານທອງ; ເມືອງຊຽງຮ່ອນ ມີ 2 ບ້ານ ຄື: ບ້ານປ່າຫວ້ານ, ບ້ານສີບົກໄສ; ເມືອງພຽງມີ 4 ບ້ານ ຄື: ບ້ານໜອງງິ້ວ, ບ້ານໂພນສະຫວ່າງ , ບ້ານນາກອກ, ບ້ານຫົວນາ; ເມືອງປາກລາຍ ມີ 3 ບ້ານ ຄື: ບ້ານຫ້ວຍຊາຍຄຳ, ບ້ານປ່າໄລ່, ບ້ານນາໂພ; ເມືອງແກ່ນທ້າວ ມີ 4 ບ້ານ ຄື: ບ້ານນາຫີນ, ບ້ານສາມຊຶ້ງ, ບ້ານຫ້ວຍຕໍ ແລະ ບ້ານດົງສາມແສນ; ເມືອງບໍ່ແຕນ ມີ 3 ບ້ານ ຄື: ບ້ານນາບໍ່ນ້ອຍ, ບ້ານໃຫຍ່ດອນເກືອ, ບ້ານຕົ້ນຕານ; ເມືອງທົ່ງມີໄຊ ມີ 2 ບ້ານ ຄື: ບ້ານແດດ ແລະ ບ້ານນາມ່ວງ;

8). ສູ້ຊົນສ້າງເມືອງເຂັ້ມແຂງຮອບດ້ານ 1 ເມືອງ ຄື: ເມືອງປາກລາຍ;

9). ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ 1 ຈຸດ ບ້ານບົວບານ-ເມືອງວາ ເມືອງປາກລາຍ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ.**

ກອງປະຊຸມເຫັນດີຮັບຮອງເອົາ 5 ມາດຕະການໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມການສະເໜີຂອງອົງການປົກຄອງແຂວງ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາຄາດໝາຍວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນຕໍ່ໜ້າໃຫ້ມີຜົນສຳເລັດຕາມແຜນການທີ່ວາງໄວ້ ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1). ຫັນເອົາວິຊາການດ້ານກະສິກຳລົງສູ່ຈຸດສຸມ, ຈັດສັນງົບປະມານໃນການສ້າງ ແລະ ປັບປຸງສູນເຕັກນິກກະສິກຳໃຫ້ສາມາດບໍລິການດ້ານວິຊາການ, ແນວພັນສັດ ແລະ ພືດ ໃຫ້ປະຊາຊົນຢູ່ບັນດາຈຸດສຸມພັດທະນາ, ເຂດຊົນນະບົດ-ຫ່າງໄກສອກຫຼີກ ແລະ ບ້ານທຸກຍາກໃຫ້ທັນເວລາ;

2). ຕິດຕາມ, ຊຸກຍູ້ ການນຳໃຊ້ແຫຼ່ງທຶນຕ່າງໆ ລວມທັງທຶນຈາກທະນະຄານນະໂຍບາຍທີ່ໄດ້ຈັດສັນເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ຖືກເປົ້າໝາຍ;

3). ປັບປຸງກອງທຶນພັດທະນາບ້ານໃຫ້ສາມາດເຄື່ອນໄຫວໄດ້ປົກກະຕິ, ແກ້ໄຂບັນຫາທີ່ເກີດຂຶ້ນຢູ່ໃນກອງທຶນໃຫ້ລຸດລົງເທື່ອລະກ້າວ;

4). ສ້າງແຜນແມ່ບົດ ແລະ ຍຸດທະສາດກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ເປັນລະບົບຄົບຊຸດ ເພື່ອເປັນບ່ອນອີງ ແລະ ສະດວກໃນການຈັດຕັ້ງປະຕິບັດແຕ່ລະໄລຍະ;

5). ປັບປຸງຄຳແນະນຳ ເລກທີ 219/ຈຂ.ຊຍ, ລົງວັນທີ 17 ກັນຍາ 2019, ກຳນົດກົນໄກການປະສານງານລະຫວ່າງສະພາປະຊາຊົນຂັ້ນແຂວງ ກັບ ອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງໄດ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການປົກຄອງແຂວງ, ເມືອງ ແລະ ອົງການຈັດຕັ້ງມະຫາຊົນທຸກຂັ້ນ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດມະຕິສະບັບນີ້ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງຊີ້ນຳ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ບັນດາຄະນະກຳມະການຂອງສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ ແລະ ມີປະສິດທິພາບປະສິດທິຜົນ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງບິລັບ ຄຳພັນເພັງ